ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

———000———

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເລກທີ 1912005 /ມຫທຊ

ນະຄອນຫຼວງວຽງຈັນ, ວັນທີ 20 ທັນວາ 2019

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ທ່ານ ຜູ້ອຳນວຍການໃຫ່ຍ ຕະຫຼາດຫຼັກຊັບລາວ

ເລື່ອງ: ແຈ້ງການກ່ຽວກັບຫຼັກເກນການໃຫ້ສິດທິຜູ້ຖືຮຸ້ນສ່ວນນ້ອຍສະເໜີຊື່ບຸກຄົນເພື່ອເຂົ້າຮັບການພິຈາລະນາເລືອກຕັ້ງເປັນກຳມະການບໍລິສັດ

- ອີງຕາມລະບຽບວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ ສະບັບເລກທີ 007 / ຄຄຊ, ລົງວັນທີ 3 ເມສາ 2014;

- ອີງຕາມລະບຽບການເປີດເຜີຍຂໍ້ມູນ ຂອງຕະຫຼາດຫຼັກຊັບລາວ ສະບັບເລກທີ 22 /ຕລຊ ລົງວັນທີ 7 ມັງກອນ 2011

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ຂໍຖືເປັນກຽດແຈ້ງການກ່ຽວກັບຫຼັກເກນການໃຫ້ສິດທິຜູ້ຖືຮຸ້ນສ່ວນນ້ອຍ ສະເໜີຊື່ບຸກຄົນເພື່ອເຂົ້າຮັບການພິຈາລະນາເລືອກຕັ້ງເປັນກຳມະການບໍລິສັດ ໂດຍມີລາຍລະອຽດດັ່ງນີ້

1. ຈຸດປະສົງ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ຕ້ອງການໃຫ້ຜູ້ຖືຮຸ້ນສ່ວນນ້ອຍສະເໜີຊື່ບຸກຄົນເພື່ອເປັນກຳມະການ ເຊິ່ງ ບໍລິສັດ ຕ້ອງການສະແດງໃຫ້ເຫັນເຖິງຄວາມໝຸ່ງໝັ້ນທີ່ຈະປະຕິບັດຕໍ່ຜູ້ຖືຮຸ້ນທຸກຄົນຢ່າງເທົ່າທຽມກັນ ແລະ ສະແດງ ເຖິງວິທີການ ຄັດເລືອກນັ້ນມີຂັ້ນຕອນ ແລະ ວິທີການໃນການພິຈາລະນາທີ່ຊັດເຈນ ແລະ ໂປ່ງໃສ ບໍລິສັດ ໄດ້ກຳນົດຫຼັກເກນການໃຫ້ຜູ້ຖືຮຸ້ນສ່ວນນ້ອຍສະເໜີຊື່ບຸກຄົນ ເພື່ອເລືອກຕັ້ງເປັນກຳມະການໃນການປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ເຊິ່ງຈະຊ່ວຍຄັດເລືອກບຸກຄົນທີ່ມີຄຸນສົມບັດເໝາະສົມມາດຳລົງຕຳແໜ່ງກຳມະການບໍລິສັດ ແລະ ສາມາດປະຕິບັດໜ້າທີ່ໄດ້ຢ່າງມີປະສິດທິພາບ ເພື່ອປະໂຫຍດສູງສຸດຂອງບໍລິສັດ ແລະ ຜູ້ມີສ່ວນໄດ້ເສຍທຸກຝ່າຍ

2. ຄຸນສົມບັດຂອງຜູ້ຖືຮຸ້ນທີ່ຈະສະເໜີຊື່ບຸກຄົນເພື່ອເຂົ້າຮັບການພິຈາລະນາຄັດເລືອກເປັນກຳມະການ

ຜູ້ຖືຮຸ້ນທີ່ຈະສະເໜີຊື່ກຳມະການຕ້ອງມີຄຸນສົມບັດ ດັ່ງນີ້

2.1 ເປັນຜູ້ຖືຮຸ້ນຂອງບໍລິສັດ ໂດຍອາດເປັນຜູ້ຖືຮຸ້ນລາຍດຽວ ຫຼື ຫຼາຍລາຍຮ່ວມກັນໄດ້

Scanned with CamScanner

2.2 ຜູ້ຖືຮຸ້ນຂອງບໍລິສັດທີ່ປະສົງຈະສະເໜີຊື່ບຸກຄົນເພື່ອເຂົ້າຮັບການພິຈາລະນາເລືອກຕັ້ງເປັນກຳມະການ ຕ້ອງຖືຮຸ້ນບໍ່ນ້ອຍກວ່າຮ້ອຍລະ 5 ຂອງຮຸ້ນບໍລິສັດທີ່ຊຳລະແລ້ວທັງໝົດ

3. ການສະເໜີຊື່ບຸກຄົນເພື່ອເຂົ້າຮັບການພິຈາລະນາເລືອກຕັ້ງເປັນສະມາຊິກສະພາບໍລິຫານ (ກຳມະການຂອງບໍລິສັດ)

3.1 ຄຸນສົມບັດ ແລະ ລັກສະນະຕ້ອງຫ້າມຂອງກຳມະການ ບຸກຄົນທີ່ໄດ້ຮັບສະເໜີຊື່ເປັນກຳມະການຕ້ອງມີຄຸນສົມບັດ ແລະ ບໍ່ມີລັກສະນະຕ້ອງຫ້າມດັ່ງນີ້

3.1.1 ມີຄຸນສົມບັດຖືກຕ້ອງ ແລະ ບໍ່ມີລັກສະນະຕ້ອງຫ້າມຕາມກົດໝາຍວ່າດ້ວຍວິສະຫະກິດເລກທີ 46/ສພຊ ລົງວັນທີ 26 ທັນວາ 2013 ແລະ ຂໍ້ຕົກລົງວ່າດ້ວຍສະພາບໍລິຫານ ເລກທີ 10/ຄຄຊ ລົງວັນທີ 26 ເມສາ 2019 ແລະ ກົດໝາຍອື່ນໆ ທີ່ກ່ຽວຂ້ອງ

3.1.2 ມີຄວາມຮູ້ ຄວາມສາມາດ ຄວາມເປັນອິດສະຫຼະ ປະຕິບັດໜ້າທີ່ກຳມະການດ້ວຍຄວາມລະມັດລະວັງດ້ວຍຄວາມຊື່ສັດສາມາດທຸ່ມເທອຸທິດເວລາໄດ້ຢ່າງເຕັມທີ່ ມີອາຍຸທີ່ ເໝາະສົມ ມີສຸຂະພາບຮ່າງກາຍທີ່ແຂງ ແຮງ ແລະ ຈິດໃຈທີ່ສົມບູນ ສາມາດປະຊຸມຄະນະກຳມະການຢ່າງສະໝ່ຳສະເໝີ ມີເວລາກຽມຕົວເປັນການລ່ວງໜ້າກ່ອນການປະຊຸມ, ມີສ່ວນຮ່ວມໃນການປະຊຸມສາມາດສະແດງຄວາມຄິດເຫັນໃນທີ່ປະຊຸມ, ປະຫວັດການເຮັດ ວຽກງານມີຈາລິຍະທຳທີ່ດີງາມ ລວມທັງໄດ້ຮັບການຍອມຮັບຈາກສັງຄົມ

3.1.3 ມີຄວາມຮູ້ ຄວາມສາມາດທີ່ເໝາະສົມກັບທຸລະກິດຂອງບໍລິສັດ ໄດ້ແກ່ ມີຄວາມຮູ້ຄວາມຊຳນານກ່ຽວກັບທຸລະກິດເຊົ່າສິນເຊື່ອ (Leasing) ຫຼື ດ້ານການເງິນການທະນາຄານ (Finance and Banking) ຫຼື ດ້ານບັນຊີ ແລະກວດສອບ (Accounting and Audit) ຫຼື ດ້ານກົນລະຍຸດການຕະຫຼາດ ແລະ ການແຂ່ງຂັນ (Marketing) ຫຼື ດ້ານເທັກໂນໂລຢີການສື່ສານ ແລະ ນະວັດຕະກຳ (Intelligent Technology and Innovation) ຫຼື ດ້ານປະຕິບັດການ (Operation) ຫຼື ດ້ານກົດໝາຍ (Legal)

3.2 ຜູ້ຖືຮຸ້ນທີ່ມີຄຸນສົມບັດຄົບຖ້ວນຕາມຂໍ້ 2 ຂອງຫຼັກເກນນີ້ ສາມາດສະເໜີຊື່ບຸກຄົນເພື່ອເຂົ້າຮັບການພິຈາລະນາຄັດເລືອກເປັນກຳມະການໄດ້ ໂດຍຈັດເຮັດເປັນໜັງສືຂໍ ສະເໜີຊື່ບຸກຄົນເພື່ອເຂົ້າຮັບພິຈາລະນາການຄັດເລືອກຕັ້ງເປັນກຳມະການ ໃນການປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ພ້ອມແນບເອກະສານ ຫຼັກຖານທີ່ກ່ຽວຂ້ອງ ແລະ ຂໍໃຫ້ຜູ້ທີ່ໄດ້ຮັບການສະເໜີຊື່ ເຮັດປະຫວັດ ແລະ ຂໍ້ມູນບຸກຄົນ ພ້ອມເອກະສານຫຼັກຖານທີ່ກ່ຽວຂ້ອງຢ່າງຄົບຖ້ວນ ແລະ ສົມບູນ ສົ່ງເຖິງບໍລິສັດພາຍໃນວັນທີ 21 ມັງກອນ 2020 ຕາມທີ່ຢູ່ນີ້

ເລຂານຸການບໍລິສັດ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ຕັ້ງຢູ່ເຮືອນເລກທີ 628 ໜ່ວຍ 19 ບ້ານ ໂພນພະເນົາ ກມ 5 ຖະໜົນໄກສອນພົມວິຫານ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ສປປ ລາວ.

ໂທ-ແຟັກ:+856 21 418 062-6

ຫຼື

ທາງ email address: hr@mahathuen.com

Scanned with CamScanner

3.3 ບໍລິສັດ ຈະພິຈາລາຄັດເລືອກລາຍຊື່ບຸກຄົນທີ່ມີຜູ້ຖືຫຸ້ນສະເໜີ ພ້ອມເອກະສານຫຼັກຖານທີ່ກ່ຽວຂ້ອງຄົບຖ້ວນ ຖືກຕ້ອງ ຜ່ານທາງຄະນະກຳມະການຄັດເລືອກ ຕາມຂະບວນການຄັດເລືອກກຳມະການຂອງບໍລິສັດ ເພື່ອສະເໜີຕໍ່ສະພາບໍລິຫານຂອງບໍລິສັດ ແລະ ບໍລິສັດຈະແຈ້ງຜົນການພິຈາລະນາໃຫ້ຮັບຮູ້ ພາຍຫຼັງປະຊຸມສະພາບໍລິຫານຂອງບໍລິສັດ ພາຍໃນ 31 ມີນາ 2020 ຕໍ່ໄປ

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ພິຈາລະນາຕາມທາງຄວນດ້ວຍ

ດ້ວຍຄວາມນັບຖືຢ່າງສູງ

ສະພາບໍລິຫານ/ຜູ້ອຳນວຍການໃຫ່ຍ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ MAHATHUEN LEASING PUBLIC COMPANY

(ທ່ານ ມານິບ ຕຣີລິດວິໄລ)

Scanned with CamScanner